ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ການນຳທຶນເຂົ້າມາລົງທຶນຢູ່ ສປປ ລາວ

ຮຽນທ່ານ ຜູ້ອ່ານທີ່ເຄົາລົບ ແລະ ຮັກແພງທຸກທີ່ວໜ້າ ມື້ນີ້ຜູ້ຂຽນມີສາລະໜ້າຮູ້ດີໆ ທີ່ກ່ຽວຂ້ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ກ່ຽວກັບການນຳທຶນເຂົ້າມາລົງທຶນຢູ່ ສປປ ລາວ, ບັນຫານີ້ກໍ່ກ່ຽວຂ້ອງກັບນັກລົງທຶນ, ທີ່ປຶກສາທາງດ້ານການລົງທຶນ, ນັກຮຽນຮູ້, ນັກສຶກສາ ແລະ ຜູ້ສົນໃຈທົ່ວໄປ.

ທ່ານຜູ້ອ່ານທີ່ເຄົາລົບ ແລະ ຮັກແພງ, ໃນມາດຕາ 24 ຂອງກົດໝາຍວ່າດ້ວຍ: ການຄຸ້ມຄອງເງິນຕາຕ່າງປະເທດ, ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014 ໄດ້ກຳນົດໄວ້ ຊຶ່ງມີເນື້ອໃນຄື:

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງຕ່າງປະເທດທີ່ມີຈຸດປະສົງມາລົງທຶນຢູ່ ສປປ ລາວ ຕ້ອງນຳເງິນທຶນເຂົ້າມາຜ່ານລະບົບທະນາຄານ ແລະ ເປີດບັນຊີເງິນຝາກນຳທະນາຄານທຸລະກິດ, ທີ່ຕັ້ງຢູ່ ສປປ ລາວ. ໝາຍຄວາມວ່າ: ຜູ້ທີ່ຈະມາລົງທຶນຢູ່ ສປປ ລາວ ຕ້ອງມາເປີດບັນຊີເງິນຝາກນຳທະນາຄານທຸລະກິດໃດໜຶ່ງ ຈະເປັນທະນາຄານລັດ, ລັດຮຸ້ນສ່ວນ ຫຼື ເອກະຊົນ ກໍ່ໄດ້ຕາມຄວາມສະດວກ ແລ້ວຈຶ່ງໂອນເງິນເຂົ້າມາ. ການນຳທຶນເຂົ້າເປັນວັດຖຸຕ້ອງນຳເອກະສານມາຢັ້ງຢືນນຳທະນາຄານແຫ່ງ ສປປ ລາວ ຕາມລະບຽບການ.

ທຶນທີ່ເປັນວັດຖຸ ແມ່ນວັດຖຸປະກອບທີ່ຜູ້ລົງທຶນໄດ້ຊື້ ແລະ ຊຳລະຢູ່ຕ່າງປະເທດດ້ວຍແຫຼ່ງເງິນຢູ່ຕ່າງປະເທດ ແລ້ວນຳເຂົ້າຢ່າງຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ເພື່ອຮັບໃຊ້ການຜະລິດ ຫຼື ດຳເນີນທຸລະກິດໂດຍກົງ.

ສຳລັບການນຳໃຊ້ເງິນຢູ່ພາຍໃນ ຫຼື ເງິນສົດທີ່ນຳເຂົ້າມາກ່ອນໜ້ານີ້ແລ້ວສັ່ງຊື້ວັດຖຸຈາກຕ່າງປະເທດ ເພື່ອມາເປັນທຶນໃນການດຳເນີນທຸລະກິດທີ່ຖືວ່າເປັນການນຳເຂົ້າທຶນແຕ່ໃຫ້ຖືວ່າເປັນການນຳເຂົ້າທົ່ວໄປ ແລະ ຕ້ອງປະຕິບັດຕາມລະບຽບການນຳເຂົ້າສິນຄ້າ.

ໃນກໍລະນີທີ່ນຳທຶນເຂົ້າມາລົງທຶນເປັນເງິນສົດ ຕ້ອງມີໃບຢັ້ງຢືນແຈ້ງເງິນສົດຈາກເຈົ້າໜ້າທີ່ພາສີປະຈຳດ່ານ ແລະ ເອກະສານອື່ນໆທີ່ກ່ຽວຂ້ອງເປັນຕົ້ນແມ່ນເອກະສານເຈດຈຳນົງ, ເອກະສານການດຳເນີນທຸລະກິດ ແລະ ເປົ້າໝາຍການນຳໃຊ້ເງິນດັ່ງກ່າວ ເພື່ອຢັ້ງຢືນການນຳເຂົ້າທຶນ, ການນຳເງິນສົດທີ່ເປັນເງິນຕ່າງຕາປະເທດເຂົ້າມານັ້ນຕ້ອງມີມູນຄ່າບໍ່ໃຫ້ເກີນໜຶ່ງຮ້ອຍລ້ານກີບ ໃນກໍລະນີຫາກກວດເຫັນຈະຖືກປັບໃໝຕາມລະບຽບການ.

ການປະຕິບັດຫຼັກການຄືແບບນີ້ ກໍ່ເພື່ອໃຫ້ສາມາດຄຸ້ມຄອງເງິນຕາຕ່າງປະເທດ, ຄຸ້ມຄອງຄັງສຳຮອງເງິນຕາຕ່າງປະເທດຂອງລັດໃຫ້ມີຄວາມເຂັ້ມແຂງ, ປະກອບສ່ວນໃນການປະຕິບັດນະໂຍບາຍເງິນຕາ, ຮັບປະກັນການນຳເຂົ້າສິນຄ້າກ້າວໄປເຖິງການຮັບປະກັນຄວາມໝັ້ນຄົງທາງດ້ານລາຄາສິນຄ້າພາຍໃນ.

**#ໂດຍ: ສອນໄຊ ສີຫາເທບ, ກົມນິຕິກຳ ທະນາຄານແຫ່ງ ສປປ ລາວ.**

**ແລກປ່ຽນເງິນຕາຊະຊາຍ ຜິດລະບຽບກົດໝາຍບ້ານເມືອງ**